ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດກອງປະຊຸມວິສາມັນຄົບຄະນະຄັ້ງທີ 2 ຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ IV ແລະ ປະກາດການນຳຂັ້ນສູງຂອງ ທຫລ ອອກພັກການ-ຮັບອຸດໜູນບຳນານ





ໃນວັນທີ 7 ກັນຍາ 2022 ທີ່ຫ້ອງປະຊຸມ ສຳນັກງານທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເປີດກອງປະຊຸມວິສາມັນຄົບຄະນະຄັ້ງທີ 2 ຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ IV ຂຶ້ນ ພາຍໃຕ້ການເປັນປະທານຂອງ ສະຫາຍ ບຸນເຫຼືອ ສິນໄຊວໍຣະວົງ ເລຂາຄະນະບໍລິຫານງານພັກ ທຫລ, ຜູ້ວ່າການ ທຫລ ແລະ ມີຄະນະບໍລິຫານງານພັກ ທຫລ ແລະ ຜູ້ທີ່ກ່ຽວຂ້ອງເຂົ້າຮ່ວມ.

ສະຫາຍ ນາງ ຂັນແກ້ວ ຫລ້າມະນີເງິາ ກຳມະການປະຈຳພັກ ໄດ້ລາຍງານສະພາບການເຄື່ອນໄຫວຊີ້ນຳ-ນຳພາຮອບດ້ານຂອງອົງຄະນະພັກ ທຫລ ໃນໄລຍະ 8 ເດືອນ 2022 ແລະ ທິດທາງ 4 ເດືອນທ້າຍປີ 2022 ໃຫ້ທີ່ປະຊຸມໄດ້ຮັບຟັງ.





ສະຫາຍ ດອນ ໄພວົງ ກຳມະການຄະນະບໍລິຫານງານພັກ, ຄະນະຈັດຕັ້ງສູນກາງພັກ ໄດ້ຂຶ້ນປະກາດການຕົກລົງຂອງຂັ້ນເທິງວ່າດ້ວຍການອະນຸມັດໃຫ້ພະນັກງານການນຳລະດັບສູງຂອງທະນາຄານແຫ່ງ ສປປ ລາວ ອອກ

ພັກການ-ຮັບອຸດໜູນບຳນານ 2 ສະຫາຍ ຄື: ສະຫາຍ ຄຳວົງ ທິບພະວົງ ຮອງເລຂາຄະນະພັກ-ຮອງຜູ້ວ່າການ ທຫລ ແລະ ສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ-ຮອງຜູ້ວ່າການ ທຫລ.




ສະຫາຍເລຂາຄະນະບໍລິຫານງານພັກໄດ້ໂອ້ລົມຕໍ່ພິທີໃນຄັ້ງນີ້ວ່າ: ການປະກາດການປັບປຸງການຈັດຕັ້ງໃນຄັ້ງນີ້ແມ່ນປະຕິບັດຕາມຫຼັກການ ແລະ ລະບຽບການປົກກະຕິ ໂດຍຕະຫຼອດໄລຍະຫຼາຍຊຸມປີທີ່ຜ່ານມາ ພາຍໃຕ້ການຊີ້ນຳ-ນຳພາຂອງ ສະຫາຍ ຄຳວົງ ທິບພະວົງ ຮອງເລຂາຄະນະບໍລິຫານງານພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ສະຫາຍ ພຸດທະໄຊ ສີວິໄລ ກຳມະການປະຈຳພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ຄະນະປະຈຳພັກ ກໍຄືຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ໄດ້ຕີລາຄາສູງ ແລະ ໄດ້ຮັບຮູ້ຢ່າງຈະແຈ້ງຢູ່ແຕ່ລະຂົງເຂດວຽກງານທີ່ແຕ່ລະສະຫາຍໄດ້ຊີ້ນຳ-ນຳພານັ້ນ ລ້ວນແຕ່ມີການເຄື່ອນໄຫວທີ່ຕັ້ງໜ້າ, ມີການພັດທະນາ ແລະ ໄດ້ສ້າງພື້ນຖານທີ່ໜັກແໜ້ນໃນຫຼາຍດ້ານ ເພື່ອຮອງຮັບການເຄື່ອນໄຫວຂອງຂະແໜງທະນາຄານ ເວົ້າລວມ, ເວົ້າສະເພາະ ກໍ່ແມ່ນການປະຕິບັດໜ້າທີ່ການເມືອງຂອງທະນາຄານແຫ່ງ ສປປ ລາວ. ທັງໝົດນັ້ນ, ໄດ້ສະແດງໃຫ້ເຫັນເຖິງຄວາມພະຍາຍາມອົດທົນ-ຜ່ານຜ່າ, ສຸມທຸກເຫື່ອແຮງ ແລະ ສະຕິປັນຍາຢ່າງບໍ່ລົດລະ-ທໍ້ຖອຍເຂົ້າໃນການຊີ້ນຳ-ນຳພາແຕ່ລະວຽກງານຂອງຂະແໜງທະນາຄານ ທີ່ແຕ່ລະສະຫາຍໄດ້ຖືກມອບໝາຍໃຫ້ຮັບຜິດຊອບໃນແຕ່ລະໄລຍະ; ໃນໂອກາດດັ່ງກ່າວ, ສະຫາຍເລຂາຄະນະບໍລິຫານງານພັກ ທຫລ ຕ່າງໜ້າຄະນະປະຈຳພັກ-ຄະນະບໍລິຫານງານພັກ ທຫລ ສະແດງຄວາມຂອບໃຈ, ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ການອຸທິດແຮງກາຍ-ແຮງໃຈເຂົ້າໃນການປະຕິບັດໜ້າທີ່ການເມືອງໃນໄລຍະຜ່ານມາ ຈົນເຮັດໃຫ້ມີຜົນສຳເລັດຕົວຈິງດ້ານຕ່າງໆຢ່າງຈົບງາມ.

***#ຂ່າວ ແລະ ພາບໂດຍ: ນາງ ປາໃນ ພົມທະລາ***

## ເສດຖະກິດຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງ ນຳໃຊ້ເງິນກີບ